| TRƯỜNG ĐẠI HỌC TÂY BẮC | SỞ GIÁO DỤC VÀ THỂ THAO TỈNH XAY SỔM BUN |
|---|---|

**BIÊN BẢN GHI NHỚ HỢP TÁC**
**GIỮA TRƯỜNG ĐẠI HỌC TÂY BẮC - BỘ GIÁO DỤC VÀ ĐÀO TẠO NƯỚC CHXHCN VIỆT NAM VÀ SỞ GIÁO DỤC VÀ THỂ THAO TỈNH XAY SỔM BUN, NƯỚC CHDCND LÀO**

Nhằm mục tiêu tăng cường quan hệ hợp tác giữa Trường Đại học Tây Bắc - Bộ Giáo dục và đào tạo (nước CHXHCN Việt Nam) và Sở Giáo dục và Thể thao tỉnh Xay Sổm Bun (nước CHDCND Lào); tăng cường mở rộng quan hệ hợp tác quốc tế trong lĩnh vực giáo dục và đào tạo; tăng cường công tác phối hợp, trao đổi thông tin trong đào tạo, quản lý Lưu học sinh Lào; thắt chặt tình đoàn kết giữa hai nước Việt – Lào.

Hôm nay ngày 27 tháng 3 năm 2019, tại Sở Giáo dục và Thể thao tỉnh Xay Sổm Bun (nước CHDCND Lào), chúng tôi gồm:

**Bên A: Trường Đại học Tây Bắc - Bộ Giáo dục và Đào tạo nước CHXHCN Việt Nam**

Địa chỉ: Đường Chu Văn An, phường Quyết Tâm, thành phố Sơn La

Điện thoại: +84. 2123.751.700 Fax: +84. 2123.751.701

Đại diện bởi: Ông Nguyễn Triệu Sơn Chức vụ: Phó Hiệu trưởng

**Bên B: Sở Giáo dục và Thể thao tỉnh Xay Sổm Bun**

Địa chỉ: Bản Phả Sạ Ngộp, huyện A Nu Vông, tỉnh Xay Sổm Bun

Điện thoại: +856 26 2100020 Fax: +856 26 2100020

Đại diện bởi: Ông Bua Kẹo – Xay Sổm Bun Chức vụ: Phó Giám đốc Sở Giáo dục – Thể thao

Hai bên đã tiến hành bàn bạc, thống nhất và cùng ký kết Biên bản ghi nhớ với nội dung cụ thể như sau:

## I. Nội dung thỏa thuận hợp tác

1. Tăng cường tình hữu nghị và hợp tác giúp đỡ lẫn nhau trong lĩnh vực đào tạo nguồn nhân lực và trao đổi học tập kinh nghiệm. Hai bên thống nhất luân phiên tổ chức gặp gỡ 02 năm một lần, bắt đầu từ năm 2019 và các năm tiếp theo. Bên cử người tự chi trả kinh phí đi lại quốc tế, bên mời chịu trách nhiệm chi phí ăn, ở, đi lại nội địa.

2. Đồng ý tăng cường quan hệ hợp tác trong lĩnh vực giáo dục và đào tạo Lưu học sinh Lào.

3. Lưu học sinh Lào khi sang Trường Đại học Tây Bắc học tập phải đảm bảo các điều kiện để được xét tuyển thẳng theo quy định của Bộ Giáo dục và Đào tạo nước CHXHCN Việt Nam đối với thí sinh là người nước ngoài.

4. Thống nhất mức học phí đối với Lưu học sinh Lào học tại Trường Đại học Tây Bắc theo diện tự túc bằng mức học phí đào tạo Lưu học sinh Lào trong chương trình hợp tác của tỉnh Xay Sổm Bun với tỉnh Sơn La. Kinh phí đào tạo hằng năm là: 12.000.000 VNĐ (mười hai triệu đồng) 01 năm/01 người, bao gồm học phí, bảo hiểm y tế, khám sức khỏe định kỳ, ký túc xá, điện nước trong định mức. Không hạn chế số lượng lưu học sinh tự túc.

5. Thống nhất chương trình học bổng Đại học và Sau đại học cho Lưu học sinh Lào diện tự túc tại Trường Đại học Tây Bắc. Mỗi năm, Trường Đại học Tây Bắc cấp 01 suất học bổng Đại học và 01 suất học bổng Sau đại học (gồm học phí, bảo hiểm y tế, khám sức khỏe định kỳ, ký túc xá, điện nước trong định mức) cho Lưu học sinh Lào của Tỉnh Xay Sồm Bun sang học tập tại Trường.

6. Mỗi năm, nếu tỉnh Xay Sồm Bun cử thêm cứ mỗi 05 Lưu học sinh sang học theo diện tự túc thì Trường Đại học Tây Bắc cấp thêm 01 suất học bổng Đại học hoặc 01 suất học bổng Sau đại học (gồm học phí, bảo hiểm y tế, khám sức khỏe định kỳ, ký túc xá, điện nước trong định mức).

**Thống nhất đầu mối liên lạc, trao đổi thông tin như sau:**

- Về phía Trường Đại học Tây Bắc: Ông: Đỗ Hồng Đức - Trưởng phòng Đào tạo đại học, số điện thoại: +84. 982.143.838, email: ducdh@utb.edu.vn, Ông: Hoàng Văn Thành - Phó Trưởng phòng Khoa học công nghệ và Hợp tác quốc tế, số điện thoại: +84.987.415.634, email: hoangthanhtbu@gmail.com.

- Về phía Sở Giáo dục và Thể thao tỉnh Xay Sồm Bun: Ông Sồm Sạ Nít – Dàng – Phó trưởng phòng Thống kê và Kế hoạch, Sở Giáo dục và Thể thao, số điện thoại: +856 20 28313842, email: somsanithyang2014@ Ông Lìa Dàng – Ca Lò, Trưởng phòng Giáo dục ngoài học đường và Dạy nghề số điện thoại: +856 30 5441778, Facebook: MouaLiayang.

**II. Nguyên tắc, phương pháp hợp tác và triển khai**

1. Hai bên cùng làm việc, trao đổi hợp tác dựa trên tinh thần hữu nghị, tôn trọng lẫn nhau.

2. Biên bản này sẽ là cơ sở cho việc ký kết thoả thuận hợp tác giữa hai đơn vị trong thời gian tới.

3. Biên bản ghi nhớ này được lập thành 04 bản gốc, hai bản bằng tiếng Việt và hai bản bằng tiếng Lào có nội dung và giá trị như nhau.

Mỗi bên giữ 01 bản tiếng Lào và 01 bản tiếng Việt để theo dõi thực hiện.

Biên bản này đã được hai bên thông qua, có hiệu lực kể từ ngày ký.

| **SỞ GIÁO DỤC VÀ THỂ THAO<br>TỈNH XAY SỒM BUN<br>PHÓ GIÁM ĐỐC** | **TRƯỜNG ĐẠI HỌC TÂY BẮC<br>PHÓ HIỆU TRƯỞNG** |
|---|---|
| ພະແນກ ສຶກສາທິການ ແລະກິລາ<br>TRƯỜNG ĐẠI HỌC TÂY BẮC | |
| **Bua Kẹo – Xay Sồm Bun** | **PGS.TS. Nguyễn Triệu Sơn** |

ມະຫາວິທະຍາໄລເຕີຍບັກ | ພະແນກສຶກສາທິການ ແລະ ກິລາ ແຂວງໄຊສົມບູນ

# ບົດບັນທຶກຊ່ວຍຈຳການຮ່ວມມື

**ລະຫວ່າງ**

**ມະຫາວິທະຍາໄລເຕີຍບັກ - ກະຊວງສຶກສາ ແລະ ກໍ່ສ້າງ ແຫ່ງ ສສ ຫວຽດນາມ**

**ກັບ ພະແນກສຶກສາທິການ ແລະ ກິລາ ແຂວງໄຊສົມບູນ ແຫ່ງ ສປປ ລາວ**

ໂດຍຈຸດປະສົງເພື່ອແນໃສ່ເພີ່ມທະວີສາຍພົວພັນຮ່ວມມື ລະຫວ່າງ ມະຫາວິທະຍາໄລເຕີຍບັກ ກັບ ພະແນກສຶກສາທິການ ແລະ ກິລາ ແຂວງໄຊສົມບູນ ແຫ່ງ ສປປ ລາວ; ເພີ່ມທະວີເປີດກວ້າງການພົວພັນຮ່ວມມືສາກົນໃນຂົງເຂດການສຶກສາ ແລະ ກໍ່ສ້າງ; ເພີ່ມທະວີວຽກງານປະສານສົມທົບ, ແລກປ່ຽນຂໍ້ມູນຂ່າວສານໃນການກໍ່ສ້າງ, ຄຸ້ມຄອງນັກສຶກສາລາວ; ຮັດແໜ້ນຄວາມສາມັກຄີ ລະຫວ່າງ ສອງປະເທດ ຫວຽດນາມ - ລາວ.

ມື້ນີ້, ວັນທີ 27 ເດືອນ ມີນາ ປີ 2019, ທີ່ ພະແນກສຶກສາທິການ ແລະ ກິລາ ແຂວງໄຊສົມບູນ ແຫ່ງ ສປປ ລາວ, ພວກຂ້າພະເຈົ້າ ປະກອບມີ:

1. **ຝ່າຍ A**: ມະຫາວິທະຍາໄລເຕີຍບັກ - ກະຊວງສຶກສາ ແລະ ກໍ່ສ້າງແຫ່ງ ສສ ຫວຽດນາມ.
   ສຳນັກງານຕັ້ງຢູ່: ຖະໜົນ ຈູ່ວັນອ່ານ, ຄຸ້ມກວຽດເຕິ່ມ, ນະຄອນເຊີນລາ
   ໂທລະສັບ: +84.2123.751.700; ແຟັກ: +84.2123.751.701
   ຕາງໜ້າໂດຍ: ທ່ານ ຮສ.ປອ. ຫງວຽນ ຈ໊ຽວ ເຊີນ, ຕຳແໜ່ງ: ຮອງອະທິການບໍດີ;
2. **ຝ່າຍ B**: ພະແນກສຶກສາທິການ ແລະ ກິລາ ແຂວງໄຊສົມບູນ.
   ສຳນັກງານຕັ້ງຢູ່: ບ້ານ ຜາສະຫງົບ, ເມືອງ ອະນຸວົງ, ແຂວງ ໄຊສົມບູນ
   ໂທລະສັບ: +856 26 210020; ແຟັກ: +856 26 210020
   ຕາງໜ້າໂດຍ: ທ່ານ ບົວແກ້ວ ໄຊສົມບູນ; ຕຳແໜ່ງ: ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງໄຊສົມບູນ.

ສອງຝ່າຍໄດ້ດຳເນີນພິຈາລະນາ, ເອກະພາບ ແລະ ພ້ອມກັນລົງນາມເຊັນບົດບັນທຶກຊ່ວຍຈຳຊຶ່ງມີເນື້ອໃນລະອຽດດັ່ງນີ້:

## I. ເນື້ອໃນການຕົກລົງຮ່ວມມື:

1. ເພີ່ມທະວີສາຍພົວພັນຮ່ວມມືມິດຕະພາບໃນຂົງເຂດການກໍ່ສ້າງຊັບພະຍາກອນມະນຸດ ແລະ ແລກປ່ຽນຖອດຖອນບົດຮຽນເຊິ່ງກັນ ແລະ ກັນ. ສອງຝ່າຍເອກະພາບພັດປ່ຽນກັນເປັນເຈົ້າພາບໃນ 2 ປີ ຕໍ່ຄັ້ງ, ເລີ່ມແຕ່ສົກປີ 2019 ເປັນຕົ້ນໄປ, ໂດຍຝ່າຍຖືກເຊີນຮັບຜິດຊອບງົບປະມານການໄປມາ, ຝ່າຍເຊື້ອເຊີນ ຮັບຜິດຊອບງົບປະມານການກິນຢູ່, ພັກເຊົາ, ການເຄື່ອນໄຫວໄປມາພາຍໃນ.

2. ເຫັນດີນຳກັນເພີ່ມທະວີສາຍພົວພັນຮ່ວມມືໃນຂົງເຂດສຶກສາ ແລະ ກໍ່ສ້າງນັກສຶກສາລາວ.
3. ນັກສຶກສາລາວຄົນໃດເມື່ອມາສຶກສາຮ່ຳຮຽນຢູ່ມະຫາວິທະຍາໄລເຕີຍບັກ ຖ້າຖືກຕ້ອງຕາມເງື່ອນໄຂທີ່ທາງໂຮງຮຽນກຳນົດໄວ້ແມ່ນໃຫ້ເຂົ້າຮຽນເລີຍ ຕາມຂໍ້ກຳນົດຂອງ ກະຊວງສຶກສາ ແລະ ກໍ່ສ້າງແຫ່ງ ສສ ຫວຽດນາມ ສຳລັບນັກສຶກສາຕ່າງປະເທດ.
4. ເອກະພາບກ່ຽວກັບຄ່າຮຽນຂອງ ນັກສຶກສາລາວທີ່ຮຽນຢູ່ມະຫາວິທະຍາໄລເຕີຍບັກ ລະບົບນອກແຜນ (ທຶນສ່ວນຕົວ) ທຽບເທົ່າກັບຄ່າຮຽນຂອງ ນັກສຶກສາລາວລະບົບທຶນໃນແຜນຕາມແຜນການ ຮ່ວມມື ລະຫວ່າງ ແຂວງໄຊສົມບູນກັບແຂວງ ເຊີນລາ. ຄ່າຮຽນແຕ່ລະປີແມ່ນ: 12.000.000 ລ້ານດົງ (ສິບສອງລ້ານດົ່ງ) ຕໍ່ຄົນຕໍ່ປີ. ຄ່າຮຽນດັ່ງກ່າວລວມທັງຄ່ານ້ຳ, ຄ່າໄຟຟ້າຕາມກຳນົດຂອງໂຮງຮຽນ, ຄ່າຫໍພັກ, ບັດນັກສຶກສາ ແລະ ຄ່າປະກັນສັງຄົມ, ຄ່າກວດສຸຂະພາບເປັນງວດ, ບັດເຂົ້າຫໍສະໝຸດ. ການຮັບນັກສຶກສານອກແຜນແມ່ນບໍ່ກຳນົດຈຳນວນ.
5. ເອກະພາບການໃຫ້ທຶນລະດັບປະລິນຍາຕີ ແລະ ລະດັບປະລິນຍາໂທ ໃຫ້ແກ່ນັກສຶກສາລາວທີ່ມາສຶກສາຢູ່ມະຫາວິທະຍາໄລເຕີຍບັກດ້ວຍທຶນສ່ວນຕົວ. ແຕ່ລະປີ, ທາງໂຮງຮຽນຈະໃຫ້ທຶນ 02 ທຶນ ດັ່ງນີ້: ທຶນລະດັບປະລິນຍາຕີ 01 ທຶນ ແລະ ທຶນລະດັບປະລິນຍາໂທ 01 ທຶນ (ໂດຍຍົກເວັ້ນຄ່າຮຽນ, ຄ່ານ້ຳ, ຄ່າໄຟຟ້າ ຕາມກຳນົດຂອງໂຮງຮຽນ, ຄ່າຫໍພັກ, ບັດນັກສຶກສາ ແລະ ຄ່າປະກັນສັງຄົມ, ຄ່າກວດສຸຂະພາບເປັນງວດ, ບັດເຂົ້າຫໍສະໝຸດ) ໃຫ້ແກ່ນັກສຶກສາຂອງແຂວງໄຊສົມບູນທີ່ມາສຶກສາຮ່ຳຮຽນຢູ່ມະຫາວິທະຍາໄລເຕີຍບັກ.
6. ໃນແຕ່ລະປີ, ຖ້າວ່າແຂວງໄຊສົມບູນສົ່ງນັກສຶກສາຜູ້ທີ່ມາຮຽນດ້ວຍທຶນສ່ວນຕົວທີ່ມະຫາວິທະຍາໄລເຕີຍບັກ 05 ຄົນໃດ ທາງໂຮງຮຽນຈະໃຫ້ທຶນ 01 ທຶນ (ປະລິນຍາຕີ ຫຼື ປະລິນຍາໂທ) ທີ່ຍົກເວັ້ນຄ່າຮຽນ (ຄ່າຮຽນດັ່ງກ່າວລວມທັງຄ່ານ້ຳ, ຄ່າໄຟຟ້າ ຕາມກຳນົດຂອງໂຮງຮຽນ, ຄ່າຫໍພັກ, ບັດນັກສຶກສາ ແລະ ຄ່າປະກັນສັງຄົມ, ຄ່າກວດສຸຂະພາບເປັນງວດ, ບັດເຂົ້າຫໍສະໝຸດ).

**ເອກະພາບແຕ່ງຕັ້ງຜູ້ປະສານງານ, ແລກປ່ຽນຂໍ້ມູນຂ່າວສານດັ່ງນີ້:**

- ມະຫາວິທະຍາໄລເຕີຍບັກ: ທ່ານ ດຣ. ໂດ້ ຮົ່ງ ດຶກ, ຫົວໜ້າຫ້ອງການກໍ່ສ້າງປະລິນຍາຕີ, ເບີໂທ: +84.982.143.838, ອີເມວ: ducdh@utb.edu.vn; ທ່ານ ຮວ່າງ ວັນ ແທັງ, ຮອງຫົວໜ້າຂະແໜງວິທະຍາສາດເຕັກໂນໂລຊີ ແລະ ຮ່ວມມືສາກົນ (ຜູ້ປະສານງານຫຼັກ), ເບີໂທ: +84.987.415.634, ອີເມວ: hoangthanhtbu@gmail.com.

- ພະແນກສຶກສາທິການ ແລະ ກິລາ ແຂວງໄຊສົມບູນ: ທ່ານ ສົມສະນິດ ຢ່າງ, ຮອງຫົວໜ້າຂະແໜງສະຖິຕິ ແລະ ແຜນການ, ເບີໂທ: +856 20 2831 3842; ອີເມວ: somsanithyang2014@gmail.com; ທ່ານ ເລ່ຍຢ່າງ ກ່າລໍ່, ຫົວໜ້າຂະແໜງ ກສນ ແລະ ອະຊີວະ, ເບີໂທ: +856 30 544 1778, Facebook: Moualiayang.

**II. ຫຼັກການ, ວິທີການຮ່ວມມື ແລະ ການຜັນຂະຫຍາຍປະຕິບັດ:**

1. ສອງຝ່າຍພ້ອມກັນເຮັດວຽກ, ພິຈາລະນາການຮ່ວມມືບົນພື້ນຖານນ້ຳໃຈແຫ່ງຄວາມມິດຕະພາບ, ນັບຖືເຊິ່ງກັນ ແລະ ກັນ.
2. ບົດບັນທຶກຊ່ວຍຈຳສະບັບນີ້ ຈະເປັນຫຼັກຖານໃຫ້ແກ່ການເຊັນຂໍ້ຕົກລົງການຮ່ວມມື ລະຫວ່າງສອງຝ່າຍໃນໄລຍະເວລາຕໍ່ໜ້າ.

3. ບົດບັນທຶກຊ່ວຍຈຳໄດ້ສ້າງເປັນ 04 ສະບັບ, ສອງສະບັບເປັນພາສາຫວຽດນາມ ແລະ ອີກສອງສະບັບເປັນພາສາລາວ, ແຕ່ລະສະບັບມີເນື້ອໃນ ແລະ ມີຄຸນຄ່າເທົ່າທຽມກັນ.

ແຕ່ລະຝ່າຍເກັບຮັກສາໄວ້ 01 ສະບັບເປັນພາສາລາວ ແລະ 01 ສະບັບເປັນພາສາຫວຽດນາມ ເພື່ອຕິດ ຕາມໃນການຈັດຕັ້ງປະຕິບັດ.

ບົດບັນທຶກສະບັບນີ້ໄດ້ຜ່ານການເຫັນດີຂອງທັງສອງຝ່າຍ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

| | |
|---|---|
| **ພະແນກສຶກສາທິການ ແລະ ກິລາແຂວງໄຊສົມບູນ** | **ມະຫາວິທະຍາໄລເຕີຍບັກ** |
| **ຫົວໜ້າພະແນກ** | **ອະທິການບໍດີ** |
| ................................................ | PHÓ HIỆU TRƯỞNG |
| ບົວແກ້ວ ໄຊສົມບູນ | PGS.TS. Nguyễn Triệu Sơn |